# ຄູ່ມື ອມພ ( ໃບເກັບເງິນ )

<u>**ຂັ້ນຕອນການອອກໃບ ອມພ**</u>

**1. ກົດໃສ່ເມນູ ລາຍຮັບ ຈາກເມນູຂ້າງເທິງ ແລ້ວກົດໃສ່ ໃບເກັບເງິນ**




**2. ຫຼັງຈາກນັ້ນກົດໃສ່ + ເພີ່ມໃບເກັບເງິນໃໝ່ ( ເພື່ອເລີ່ມຕົ້ນສ້າງໃບເກັບເງິນ )**




**3. ລະບົບຈະສະແດງການສ້າງຮ່າງຂອງໃບສະເໜີລາຄາ ຕື່ມຂໍ້ມູນ ແລະ ກົດເພີ່ມ ເພື່ອໃສ່ລາຍການ ສິນຄ້າ ຫຼື ບໍລິການ**




**ໝາຍເຫດ: ຫ້ອງແບບຟອມທີ່ມີເຄື່ອງໝາຍ( * ) ແມ່ນລະບົບບັງຄັບໃຫ້ໃສ່ຂໍ້ມູນ**

- **ລູກຄ້າ: ໝາຍເຖິງເພີ່ມຊື່ລູກຄ້າ ກົດໃສ່ຮູບ + ( ຫ້ອງສີຟ້າ ) ຈະມີບ່ອນເພີ່ມຂໍ້ມູນຂອງລູກຄ້າ**
- **ສະກຸນເງິນ:** ໝາຍເຖິງ ເລືອກສະກຸນເງິນທີ່ເຮົາຈະຂາຍສິນຄ້າ ຫຼື ການບໍລິການ. ອັດຕາແລກປ່ຽນແມ່ນສາມາດແກ້ໄຂໄດ້ຕາມເລດມື້ທີ່ເຮົາຂາຍໄດ້ເລີຍ
- **ວັນທີ: ໝາຍເຖິງ ເລືອກວັນທີທີ່ເຮົາຂາຍສິນຄ້າ ຫຼື ການບໍລິການ**
- **ວັນທີຄົບກຳນົດ: ໝາຍເຖິງ ວັນທີ່ກຳນົດສາມາດເລືອກໃສ່ໄດ້ຕາມຄວາມຕ້ອງການ**
- **ໃບສັ່ງເລກທີ: ໝາຍເຖິງ ໃບສັ່ງຈາກເລກທີຂອງລູກຄ້າທີ່ນຳມາໃຫ້ເຮົາ ແລະ ການອ້າງອີງ ( ຖ້າບໍ່ມີບໍ່ໃສ່ )**
- **ຫົວຂໍ້: ໝາຍເຖິງ ຫົວຂໍ້ຂອງໃບບິນທີ່ເຮົາຕ້ອງການໃສ່ ( ຖ້າບໍ່ມີບໍ່ໃສ່ )**
- **ປະເພດ: ໝາຍເຖິງ ກົດໃສ່ ຮູບ 3 ຫຼ່ຽມ ( ປະເພດຕາມທີ່ເຮົາຕ້ອງການ ຕົວຢ່າງ: ຂາຍການບໍລິການ ( ໃຫ້ເຮົາກົດໃສ່ຂາຍການບໍລິການອື່ນໆ )**

## 4. ຫຼັງຈາກໃສ່ຂໍ້ມູນຄົບ ແລ້ວ ກົດ ບັນທຶກ



- ລາຍການ: ໝາຍເຖິງ ເພີ່ມຊື່ລາຍການສິນຄ້າ ຫຼື ການບໍລິການ, ຖ້າມີລາຍການຍ່ອຍ ຫຼື ລາຍລະອຽດຕ່າງໆ ແມ່ນໃຫ້ພິມໃສ່ ຫ້ອງດ້ານລຸ່ມ, ກົດໃສ່ + ເພີ່ມ
- ຈຳນວນ: ໝາຍເຖິງ ຈຳນວນສິນຄ້າ ຫຼື ຈຳນວນການບໍລິການ ( ຖ້າຫົວໜ່ວຍບໍ່ມີໃຫ້ເຮົາເພີ່ມຢູ່ ເມນູສາງ => ຫົວໜ່ວຍ )
- ລາຄາ: ໝາຍເຖິງ ລາຄາສິນຄ້າ ຫຼື ການບໍລິການຕໍ່ຫົວໜ່ວຍ
- ອາກອນ: ກົດເລືອກ ຍົກເວັ້ນອາກອນ ຫຼື VAT ຫຼື X = ( ບໍ່ມີອາກອນ )

5. ພາຍຫຼັງກົດບັນທຶກແລ້ວ ກົດປ່ຽນສະຖານະ ຈາກໃບສະເໜີລາຄາ ເປັນ ໃບເກັບເງິນ ( ເພື່ອສ້າງໃບ ອມພ )




6. ລະບົບຈະສະແດງສະຖານະໃບເກັບເງິນ ໃຫ້ ( ສຳເລັດໃນການປ່ຽນສະຖານະ )




7. ວິທີເບິ່ງຕົວຢ່າງ ໃບເກັບ ເງິນອາກອນມູນຄ່າເພີ່ມ ໃຫ້ ກົດໃສ່ ຮູບ 3 ຫຼ່ຽມ ແລ້ວ ກົດ ເບິ່ງຕົວຢ່າງ ( ເພື່ອເບິ່ງຕົວຢ່າງວ່າໃບ ອມພ ທີ່ເຮົາຈະສ້າງຖືກຕ້ອງແລ້ວບໍ, ຄົບຖ້ວນຕາມໂຕຈິງບໍ, ເພາະວ່າຖ້າສ້າງໄປແລ້ວ ແມ່ນບໍ່ສາມາດແກ້ໄຂໄດ້ )



**8. ກົດໃສ່ ສ້າງໃບເກັບເງິນອາກອນມູນຄ່າເພີ່ມ**




**9. ລະບົບຈະຂຶ້ນມາເຕືອນ ໃຫ້ກົດໃສ່ OK ເພື່ອໃຫ້ລະບົບດຳເນີນການສ້າງໃບ ອມພ ໃຫ້**




**10. ຫຼັງຈາກທີ່ສ້າງສຳເລັດ ວິທີ ພິມໃບດຽວ: ກົດ ພິມໃບເກັບເງິນອາກອນມູນຄ່າເພີ່ມ ( ໃບສີແດງ ໄວ້ໃຫ້ສຳລູກຄ້າ)**

**ວິທີພິມທັງໝົດ 3 ໃບ : ກົດໃສ່ ຮູບ 3 ຫຼ່ຽມ ແລ້ວ ກົດໃສ່ ໃບເກັບເງິນອາກອນມູນຄ່າເພີ່ມທັງໝົດ**




ຫຼັງຈາກນັ້ນ ເຮົາຈະໄດ້ ໃບອາກອນມູນຄ່າເພີ່ມ ດັ່ງນີ້:





**ວິທີເຂົ້າສູ່ລະບົບ**

**[https://youtu.be/SRs9sYCNh4g](https://youtu.be/SRs9sYCNh4g)**

**ວິດີໂອແບບຊ້າ ວິທີອອກໃບເກັບເງິນອາກອນມູນຄ່າເພີ່ມ ແບບລະອຽດ**

**[https://youtu.be/ze7vANLd6tQ](https://youtu.be/ze7vANLd6tQ)**

**ວິດີໂອ ວິທີອອກໃບເກັບເງິນອາກອນມູນຄ່າເພີ່ມ**

**[https://youtu.be/8V1aCMqeIY4?si=-c6mGaAXktQ7WvVH](https://youtu.be/8V1aCMqeIY4?si=-c6mGaAXktQ7WvVH)**

**ວິທີເພີ່ມບັນຊີ ລູກຄ້າ**

**[https://help.bansi.la/lo/docs/114-](https://help.bansi.la/lo/docs/114-)**

**ວິທີເພີ່ມບັນຊີ ບໍລິສັດ**

**[https://help.bansi.la/lo/docs/115-](https://help.bansi.la/lo/docs/115-)**

**ວິທີຍົກເລີກໃບບິນ ອມພ (ຕ້ອງບໍ່ເກີນເວລາທີ່ກຳນົດ ວັນທີ 20ເດືອນຖັດໄປ)**

**https://help.bansi.la/lo/docs/116-**

**ວິທີ ຊອກບິນ**

**https://help.bansi.la/lo/docs/129-**